ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ: 4872-ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 15 OCT 2026

ໜັງສືແຈ້ງເຊີນປະມູນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ), ຂໍເຊີນບັນດາບໍລິສັດ ທີ່ສົນໃຈ ແລະ ມີເງື່ອນໄຂ ເໝາະສົມ ເຂົ້າຮ່ວມປະມູນເປີດກວ້າງພາຍໃນ ສຳລັບ ວຽກຈັດຊື້ອຸປະກອນຄວບຄຸມພາກໄຟຟ້າ ຂອງ ເຂື່ອນໄຟຟ້ານ້ຳຈຽນ.

ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ຂອງ ຜ-ຟຟລ ພາຍໃຕ້ ລະບຽບຈັດຊື້-ຈັດຈ້າງ ຜ-ຟຟລ, ສະບັບປັບປຸງ ປີ 2024, ລົງວັນທີ 12/04/2024.

ບໍລິສັດທີ່ມີເງື່ອນໄຂເໝາະສົມ ສົນໃຈ ສາມາດຕິດຕໍ່ພົວພັນ ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ ສຳນັກງານໃຫຍ່ ຜ-ຟຟລ, ຝ່າຍກົດໝາຍ-ສັນຍາ, ພະແນກຈັດຊື້, ໃນວັນລັດຖະການ, ນັບຈາກວັນທີ: 21 OCT 2026 ເຖິງ ວັນທີ: 06 NOV 2026, ຕອນເຊົ້າ ເວລາ 08:30 – 12:00 ໂມງ ແລະ ຕອນບ່າຍ 13:00 – 17:00 ໂມງ. ສຳນັກງານ ຕັ້ງຢູ່ ຖະໜົນມິດຕະພາບ ລາວ - ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ, ຕູ້ ປ.ນ 2392, ໂທລະສັບ: (856-21) 316 142, ໂທລະສານ: (856-21) 316 141, 316 834.

ບໍລິສັດ ທີ່ສົນໃຈ ແລະ ຕ້ອງການຊື້ເອກະສານປະມູນ, ຕ້ອງຍື່ນໜັງສືສະເໜີຊື້ຊອງປະມູນ ເຖິງ ຜ-ຟຟລ, ເລີ່ມແຕ່ວັນທີ 21 OCT 2026 ເຖິງວັນທີ: 06 NOV 2026, ໃນລາຄາ 500,000 (ຫ້າແສນ) ກີບ/ຊຸດ, ວິທີການຊຳລະຕ້ອງເປັນເງິນສົດ, ໂດຍຈຳນວນເງິນດັ່ງກ່າວ ຜ-ຟຟລ ຈະບໍ່ມີການສົ່ງຄືນ.

ການລົງສຳຫຼວດ ແລະ ເກັບກຳຂໍ້ມູນ ຈະໄດ້ຈັດຂຶ້ນໃນວັນທີ: 10 NOV 2026 ເວລາ 13:00 ໂມງ, ທີ່ ເຂື່ອນໄຟຟ້ານ້ຳຈຽນ, ບ້ານ ຊຳກຳທອງ, ເມືອງ ທ່າໂທມ, ແຂວງ ໄຊສົມບຸນ. **(ຖ້າເປັນພາກບັງຄັບ)**

- ສຳລັບການເດີນທາງ ແລະ ຄ່າໃຊ້ຈ່າຍທີ່ເກີດຂຶ້ນ ເປັນຄວາມຮັບຜິດຊອບ ຂອງ ຜູ້ເຂົ້າຮ່ວມການສຳຫຼວດ.

ຊອງປະມູນຕ້ອງສົ່ງໃຫ້ ຜ-ຟຟລ ຕາມທີ່ຢູ່ຂ້າງເທິງ, ກ່ອນເວລາ 14:00ໂມງ, ວັນທີ 25 NOV 2026 ຊອງປະມູນໃດທີ່ສົ່ງຊ້າກວ່າເວລາກຳນົດໄວ້, ຜ-ຟຟລ ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ, ຊອງ ປະມູນຈະເລີ່ມເປີດໃນເວລາ 14:00 ໂມງ, ວັນທີ 25 NOV 2026 ໂດຍເປີດຊ້ອງໜ້າຄະນະກຳມະການຈັດຊື້ ຜ-ຟຟລ ແລະ ຕົວແທນ ຂອງ ຜູ້ເຂົ້າແຂ່ງຂັນປະມູນທີ່ສົນໃຈເຂົ້າຮ່ວມນຳ.

ດ້ວຍຄວາມນັບຖື,

ຜູ້ອຳນວຍການໃຫຍ່

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ດາວວຽງ ສຸບັນທະລາດ

ຮັກສາການ ຜູ້ອຳນວຍການໃຫຍ່

ຖະໜົນ ມິດຕະພາບ ລາວ-ໄທ, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ຕູ້ ປ.ນ 2392, ນະຄອນຫຼວງວຽງຈັນ.

ໂທລະສັບ: (856-21) 316142, ແຟັກ: (856-21) 316141, ອີເມລ: edlgenhq@edlgen.com.la; ເວັບໄຊທ: www.edlgen.com.la